ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 96 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 MAR 2013

# ແຈ້ງການ

ເຖິງ: ບັນດາທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ, ທະນາຄານເອກະຊົນ, ທະນາຄານສາຂາຕ່າງປະເທດ ແລະ ຮ້ານແລກປ່ຽນເງິນຕາ.

ເລື່ອງ: ການຂາຍເງິນຕາຕ່າງປະເທດໃຫ້ແກ່ລູກຄ້າລາຍໃຫຍ່

- ອີງຕາມລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ແລະ ບົດແນະນຳການຈັດຕັ້ງປະຕິບັດລັດຖະບັນຍັດ ສະບັບເລກທີ 01/ທຫລ, ລົງວັນທີ 02 ເມສາ 2010.

**ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ ດັ່ງນີ້:**

1. ການຂາຍເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດໃຫ້ແກ່ລູກຄ້າລາຍໃຫຍ່ ທີ່ມີວົງເງິນເກີນ 20 ລ້ານກີບທຽບເທົ່າ ຕ້ອງປະຕິບັດຕາມມາດຕາ 5 ຂອງບົດແນະນຳການຈັດຕັ້ງປະຕິບັດລັດຖະບັນຍັດວ່າ ດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ທຫລ, ລົງວັນທີ 02 ເມສາ 2010 ຢ່າງເຂັ້ມງວດ;
2. ການສະເໜີຊື້ເງິນຕາຕ່າງປະເທດ ຂອງທະນາຄານທຸລະກິດ ຈາກ ທຫລ ຕ້ອງມີເອກະສານລາຍງານການຂາຍເງິນຕາຕ່າງປະເທດ ໃຫ້ລູກຄ້າລາຍໃຫຍ່ ຂອງມື້ຖັດມາ ແລະ ຕ້ອງແມ່ນຄະນະອຳນວຍການທະນາຄານທຸລະກິດ ເປັນຜູ້ລົງລາຍເຊັນ;
3. ການຊື້ເງິນຕາຕ່າງປະເທດ ຂອງຮ້ານແລກປ່ຽນເງິນຕາ ໃຫ້ປະຕິບັດຕາມແຈ້ງການກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ ກັບກົມບໍລິການ ທຫລ ສະບັບເລກທີ 450/ກບງ, ລົງວັນທີ 11 ພຶດສະພາ 2012;
4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ລະບຽບການໃດທີ່ຂັດກັບແຈ້ງການສະບັບນີ້ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສົມພາວ ໄພສິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la